# ພິທີເປີດໂຕ OneX (ວັນເອັກສ) ພື້ນທີ່ ຊື້-ຂາຍ ສິນຄ້າອອນລາຍ ລະຫວ່າງ BCEL ແລະ ບໍລິສັດ Best Telecom ຈໍາກັດ




ໃນຕອນແລງຂອງວັນທີ 21 ທັນວາ 2022 ໃນງານ Lao Digital Week 2022 ທີ່ຫໍປະຊຸມແຫ່ງຊາດ ຫ້ອງ 6 ໄດ້ມີການເປີດໂຕທົດລອງນໍາໃຊ້ **OneX (ວັນເອັກສ) ພື້ນທີ່ ຊື້-ຂາຍ ສິນຄ້າອອນລາຍ ຟັງຊັ່ນໃໝ່ໃນ App BCEL One,** ໃຫ້ກຽດເປີດພິທີໂດຍ ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອໍານວຍການທະນາຄານການຄ້າຕ່າງປະເທດລາວມະຫາຊົນ ແລະ ທ່ານ ລິດທິກອນ ພູມມະສັກ ປະທານ ກໍາມະການກຸ່ມບໍລິສັດ AIF ແລະ ຜູ້ອໍານວຍການໃຫຍ່ ບໍລິສັດ Best Telecom Lao ເປັນກຽດເຂົ້າຮ່ວມເພື່ອເປັນສັກຂີພະຍານໂດຍທ່ານ ແກ້ວວິສຸກ ໂສລະພົມ ຮອງລັດຖະມົນຕີກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ພາກສ່ວນທີ່ກ່ຽວຂ້ອງພ້ອມດ້ວຍສື່ມວນຊົນຈາກຫຼາຍພາກສ່ວນ. ການເປີດໂຕໃນຄັ້ງນີ້ແມ່ນເພື່ອເປັນການປັບປ່ຽນຄັ້ງໃໝ່ຂອງການ ຊື້-ຂາຍອອນລາຍ ແລະ ເພື່ອຂັບເຄື່ອນສັງຄົມໃຫ້ກ້າວໄປຂ້າງໜ້າ ໂດຍການຮ່ວມເອົາສິນຄ້າ ແລະ ການບໍລິການທີ່ຫຼາກຫຼາຍ ມາໄວ້ພາຍໄວ້ໃນແອັບດຽວ ເພື່ອສ້າງຄວາມສະດວກສະບາຍໃຫ້ກັບສັງຄົມ.

OneX ມີເປົ້າໝາຍເປັນສູນການ ການຄ້າແບບດີຈີຕ້ອນທີ່ດີທີ່ສຸດໃນລາວ ມີສິນຄ້າ-ການບໍລິການທີ່ມີຄຸນນະພາບ, ຫຼາກຫຼາຍ, ແລະ ທຸກຄົນສາມາດເຂົ້າເຖິງໄດ້ທົ່ວປະເທດຜ່ານແອັບ BCEL One ອີກດ້ວຍ, ໃຊ້ງານງ່າຍ ແລະ ສະດວກ, ພ້ອມຍົກສູງ ແລະ ສ້າງມາດຕະຖານດ້ານຄວາມປອດໄພໃນການ ຊື້-ຂາຍ ອອນລາຍ ໃຫ້ມີຄວາມໂປ່ງໃສທີ່ສຸດ ແລະ ໄດ້ມາດຕະຖານສາກົນ. ເປັນການຄ້າອີເລັກໂທຼນິກທີ່ຄອບຄຸມຜູ້ຊື້, ຜູ້ຂາຍ ທັງພາຍໃນ ແລະ ຕ່າງປະເທດ ພາຍໃຕ້ຄໍາຂວັນ ຄົນຊື້ກໍ່ງ່າຍຄົນຂາຍກໍ່ສະດວກ.

ສາມາດທົດລອງ ຫຼື ສອບຖາມຂໍ້ມູນເພີ່ມຕື່ມໄດ້ທີ່:
ງານວາງສະແດງ Lao Digital Week 2022 ທີ່ຫໍປະຊຸມແຫ່ງຊາດ ວັນທີ 21-25 ທັນວາ 2022 ນີ້
ຫຼືໂທ: 020 8888 1516







ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທັນສະໄໝ ວ່ອງໄວ ໝັ້ນໃຈ